Washington State
Department of Social & Health Services

DDA Developmental Disabilities Administration

# Developmental Disabilities Administration ການຕີຣາຄາປະເມີນຜົນ

ລາຍລະອຽດສຳລັບບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານຄວາມຈະເຣີນເຕີບໂຕ

## ການຕີຣາຄາປະເມີນຜົນຂອງພະແນກ **DDA** ແມ່ນຫຍັງ?

ການຕີຣາຄາປະເມີນຜົນຂອງ Developmental Disabilities Administration (DDA) (ພະແນກບໍຣິຫານຄວາມເສັຽອົງຄະດ້ານຄວາມຈະເຣີນເຕີບໂຕ) ແມ່ນຄຳຖາມຈຸນຶ່ງທີ່ຜູ້ຈັດການເອກະສານຂອງທ່ານຈະຖາມທ່ານເພື່ອຈະຊ່ວຍຕັດສິນວ່າການອູ້ມຊູແນວໃດແດ່ທີ່ທ່ານຕ້ອງການ. ມັນເປັນຫົນທາງນຶ່ງທີ່ຈະຊ່ວຍພະແນກ DDA ໃຫ້ເຮັດວຽກໄດ້ດີທີ່ສຸດທີ່ເຂົາເຈົ້າສາມາດເຮັດໄດ້ສຳລັບທ່ານ.

## ມັນມີສາມພາກສ່ວນໃນການຕີຣາຄາປະເມີນຜົນຂອງພະແນກ **DDA:**

1. ພາກທີນຶ່ງຂອງການຕີຣາຄາປະເມີນຜົນຖາມຄຳຖາມກ່ຽວກັບການອູ້ມຊູທີ່ທ່ານຕ້ອງການເພື່ອຈະອາສັຍຢູ່ໃນຊຸມນຸມຊົນ ແລະ ມີສ່ວນຮ່ວມໃນກິດຈະກຳທີ່ທຸກໆຄົນເຮັດ.

2. ພາກທີສອງຖາມຄຳຖາມກ່ຽວກັບຄວາມຊ່ວຍເຫລືອທີ່ທ່ານຕ້ອງການນຳການເບິ່ງແຍງດູແລສ່ວນຕົວ ແລະ ກິດຈະກຳການດຳຣົງຊີວິດປະຈຳວັນເຊັ່ນວ່າການກິນ, ການອາບນ້ຳ, ການນຸ່ງເຄື່ອງ, ອື່ນໆ.

3. ພາກທີສາມແມ່ນແຜນການທີ່ອະທິບາຍການອູ້ມຊູ ແລະ ການບໍຣິການທີ່ທ່ານຈະໄດ້ຮັບ ແລະ ຜູ້ທີ່ຈະເອົາການອູ້ມຊູໃຫ້.

## ເມື່ອໃດຂ້າພະເຈົ້າຈະໄດ້ຮັບການຕີຣາຄາປະເມີນຜົນຂອງພະແນກ **DDA?**

ທ່ານຈະໄດ້ຮັບການຕີຣາຄາປະເມີນຜົນກ່ອນທີ່ທ່ານຈະເລີ້ມຕົ້ນຮັບເອົາການບໍຣິການຈາກພະແນກ Developmental Disabilities Administration. ຖ້າຫາກວ່າທ່ານໄດ້ຮັບການບໍຣິການແລ້ວ, ທ່ານຈະໄດ້ຮັບການຕີຣາຄາປະເມີນຜົນໃຫມ່ທຸກໆປີ.

## ເປັນຫຍັງຜູ້ຈັດການເອກະສານຂອງຂ້າພະເຈົ້າຈຶ່ງໃຊ້ການຕີຣາຄາປະເມີນຜົນຂອງພະແນກ **DDA?**

ພະແນກ DDA ຢາກຈະຖາມທຸກໆຄົນຄຳຖາມອັນດຽວກັນ. ຜູ້ຈັດການເອກະສານໃຊ້ຄອມພິວເຕີເພື່ອຈະຊ່ວຍເຂົາເຈົ້າຈື່ທີ່ຈະຖາມຄຳຖາມສຳຄັນທຸກໆອັນ ແລະ ໄດ້ຄຳຕອບຂອງທ່ານຖືກຂຽນລົງໄວ້. ອັນນີ້ຈະຊ່ວຍເຫລືອພະແນກ DDA ໃຫ້ແນ່ໃຈວ່າຄວາມສາມາດຂອງທຸກໆຄົນໄດ້ຖືກວັດແທກໃນແບບດຽວກັນ ແລະ ບໍ່ມີຫຍັງຈະຖືກລືມໄປ.

## ມັນຫມາຍຄວາມວ່າແນວໃດສຳລັບຂ້າພະເຈົ້າ?

ການຕີຣາຄາປະເມີນຜົນຂອງພະແນກ DDA ຈະຊ່ວຍໃຫ້ຜູ້ຈັດການເອກສານຂອງທ່ານທີ່ຈະຮູ້ຈັກວ່າຄວາມສາມາດຂອງທ່ານແມ່ນຫຍັງແດ່ ແລະ ສິ່ງທີ່ທ່ານຕ້ອງການເພື່ອຈະຊ່ວຍເຫລືອທ່ານວາງແຜນສຳລັບອະນາຄົດ.

## ຂ້າພະເຈົ້າສາມາດລົ້ມເຫລວໄດ້ບໍ່?

ບໍ່, ທ່ານບໍ່ສາມາດລົ້ມເຫລວໄດ້. ການຕີຣາຄາປະເມີນຜົນຂອງພະແນກ DDA ແມ່ນກ່ຽວກັບທ່ານ ແລະ ຄວາມສາມາດ ແລະ ຄວາມຕ້ອງການຂອງທ່ານ. ມັນຈະບໍ່ມີຄຳຕອບທີ່ຖືກ ຫລື ຜິດ, ພຽງແຕ່ເປັນຄຳຕອບຂອງທ່ານ.

## ຖ້າຫາກວ່າຂ້າພະເຈົ້າບໍ່ເຂົ້າໃຈຄຳຖາມເດ?

ທ່ານສາມາດມີຄົນໃດຄົນນຶ່ງຢູ່ນຳທ່ານຜູ້ທີ່ຈະຊ່ວຍທ່ານຕອບຄຳຖາມ. ທ່ານສາມາດເລືອກເອົາຄົນໃດກໍໄດ້ໃຫ້ເປັນຄົນນັ້ນ. ຖ້າຫາກວ່າທ່ານມີຜູ້ປົກຄອງ, ບຸກຄົນນັ້ນຈະຖືກເຊີນມາຮ່ວມໃນການພົບກັນອີກຄືກັນ.

## ມັນຈະໃຊ້ເວລາດົນນານປານໃດ?

ການຕີຣາຄາປະເມີນຜົນຂອງພະແນກ DDA ໂດຍທົ່ວໄປແລ້ວຈະໃຊ້ເວລາ 2 ຫາ 4 ຊົ່ວໂມງ. ຖ້າຫາກວ່າມັນດົນນານເກີນໄປໂພດສຳລັບທ່ານ, ທ່ານສາມາດຂໍໃຫ້ຜູ້ຈັດການເອກະສານຂອງທ່ານທີ່ຈະເຮັດສ່ວນນຶ່ງໃນວັນນຶ່ງ ແລະ ອີກສ່ວນນຶ່ງໃນວັນອື່ນອີກ.

## ຖ້າຫາກວ່າຂ້າພະເຈົ້າບໍ່ຢາກຈະຕອບຄຳຖາມເດ?

ທ່ານສາມາດເລືອກທີ່ຈະບໍ່ຕອບຄຳຖາມກໍໄດ້, ແຕ່ວ່າຖ້າຫາກວ່າທ່ານຕ້ອງການຢາກໄດ້ການບໍຣິການຈາກພະແນກ DDA, ທ່ານ ຫລື ຜູ້ຕາງຫນ້າຂອງທ່ານຈະຕ້ອງໄດ້ຕອບມັນ.

## ແມ່ນຫຍັງຈະເກີດຂຶ້ນຫລັງຈາກຂ້າພະເຈົ້າຕອບຄຳຖາມທັງຫມົດ?

ຫລັງຈາກທີ່ທ່ານຕອບຄຳຖາມທຸກໆອັນ, ຜູ້ຈັດການເອກະສານຂອງທ່ານຈະຊ່ວຍທ່ານເຮັດແຜນການອອກມາສຳລັບປີທີ່ຈະມາເຖິງ. ແຜນການຈະອະທິບາຍການບໍຣິການ ແລະ ການອູ້ມຊູທີ່ທ່ານຈະໄດ້ຮັບ ແລະ ຜູ້ທີ່ຈະເອົາການບໍຣິການໃຫ້. ຜູ້ຈັດການເອກະສານຂອງທ່ານຈະເອົາໃບໂກປີຂອງແຜນການໃຫ້ທ່ານ.

## ຖ້າຫາກວ່າຂ້າພະເຈົ້າບໍ່ມັກແຜນການຂອງຂ້າພະເຈົ້າເດ?

ຜູ້ຈັດການເອກະສານຂອງທ່ານຈະອະທິບາຍໃຫ້ທ່ານຟັງວ່າທ່ານມີສິດທິໃນການອຸທອນ, ຊຶ່ງຫມາຍຄວາມວ່າທ່ານສາມາດບອກຄົນໃດຄົນນຶ່ງອີກວ່າເປັນຫຍັງທ່ານຈຶ່ງບໍ່ເຫັນພ້ອມນຳແຜນການ. ບຸກຄົນຜູ້ທີ່ກວດເບິ່ງການອຸທອນຄືນຈະຕັດສິນວ່າແມ່ນຫຍັງຈະເກີດຂຶ້ນຕໍ່ໄປ.

## ຖ້າຫາກວ່າຄວາມຕ້ອງການຂອງຂ້າພະເຈົ້າປ່ຽນແປງເດ?

ຖ້າຫາກວ່າຄວາມຕ້ອງການຂອງທ່ານປ່ຽນແປງ, ຈົ່ງໂທຫາຜູ້ຈັດການເອກະສານຂອງທ່ານເພື່ອຈະນັດເວລາເພື່ອຈະແລກປ່ຽນຣາຍຣະອຽດໃຫມ່.

## ຖ້າຫາກວ່າຂ້າພະເຈົ້າຍັງມີຄຳຖາມຢູ່ເດກ່ຽວກັບການຕີຣາຄາປະເມີນຜົນໃຫມ່ຂອງພະແນກ **DDA?**

*ຈົ່ງໂທຫາຜູ້ຈັດການເອກະສານຂອງທ່ານ ຫລື ແວ່ເຂົ້າປ້ຽມແວບໄຊທ໌ການຕີຣາຄາປະເມີນຜົນຂອງພະແນກ DDA ໄດ້ທີ່:*
**www.dshs.wa.gov/ddd/CAP.shtml**